### ແຫລ່ງຊ່ວຍເຫລືອທາງດ້ານກົດຫມາຍ

ໂຄງການ Northwest Justice Project Coordinated Legal Education, Advice & Referral (CLEAR)
(ລາຍໄດ້ຕ່ຳເທົ່ານັ້ນ)

**1-888-201-1014**
**www.nwjustice.org**

### Northwest Women's Law Center

ສາຍລາຍລະອຽດ ແລະ ການສົ່ງຕໍ່

**(206) 621-7691**
**www.nwwlc.org**

### Washingon State Bar Association

ເພື່ອຈະຊອກຫາການບໍລິການສົ່ງຕໍ່ທາງດ້ານກົດຫມາຍຢູ່ໃນຄາວຕີຂອງທ່ານເທົ່ານັ້ນ:

**800-945-9722**
**www.wsba.org**

### ແວບໄຊທ໌

ຕິດຕໍ່ຫາສານໄດ້ທີ່:

**www.courts.wa.gov/**

### Divison of Child Support

**www.dshs.wa.gov/dcs/**

### ຄລີນິກກົດຫມາຍ ແລະ ລາຍລະອຽດກ່ຽວກັບກົດຫມາຍ

**wsba.org/atj/contact/legasst.htm**
**washingtonlawhelp.org**

### ອີແມລ໌

Division of Child Support

**DCS-CRU@dshs.wa.gov**

### ອີແມລ໌

ທ່ານສາມາດໃຫ້ຄົນໃດຄົນນຶ່ງ (ພີ່ນ້ອງ, ຫມູ່ເພື່ອນ ຫລື ຜູ້ຕາງຫນ້າທາງດ້ານກົດຫມາຍ) ໂທຫາພະແນກ DCS ໃນນາມຂອງທ່ານເອງ. ພວກເຮົາສາມາດຕອບຄຳຖາມທົ່ວໄປສຳລັບທຸກໆຄົນໄດ້, ແຕ່ວ່າພວກເຮົາບໍ່ສາມາດເວົ້າລົມລາຍລະອຽດກ່ຽວກັບສຳນວນເອກສານອັນເຈາະຈົງນອກຈາກວ່າພວກເຮົາມີຫນັງສືອະນຸຍາດຂອງທ່ານ.

ໂທຫາຫ້ອງການ DCS ໃກ້ບ່ານທ່ານທີ່ສຸດ ຫລື ໂທຫາ 800-442-KIDS (5437) ເພື່ອຈະຊອກຫາຫ້ອງການທີ່ກຳສຳນວນເອກສານຂອງທ່ານ.

### ຫ້ອງການ DCS

| | |
|---|---|
| Everett | 800-729-7580<br>425-438-4800 |
| Kennewick | 800-345-9981<br>509-374-2000 |
| Olympia | 800-345-9964<br>360-664-6900 |
| Seattle | 800-526-8658<br>206-341-7000 |
| Spokane | 800-345-9982<br>509-363-5000 |
| Tacoma | 800-345-9976<br>253-597-3700 |
| Vancouver | 800-345-9984<br>360-696-6100 |
| Wenatchee | 800-535-1113<br>509-886-6800 |
| Yakima | 800-441-0859<br>509-249-6000 |
| ສູນກາງໃຫຍ່ | 800-457-6202<br>360-664-5000 |

ໂຄງການເກັບເງິນລ້ຽງລູກຂອງຣັດວໍຊິງຕັນ



# ຂ້າພະເຈົ້າຕ້ອງໄດ້ຈ່າຍເງິນລ້ຽງລູກບໍ່ຖ້າຫາກວ່າຂ້າພະເຈົ້າກຳລັງໄດ້ຮັບການຊ່ວຍເຫລືອສາທາຣະນະຢູ່?

Washington State Department of Social & Health Services
*Transforming lives*

## ທ່ານຕິດໜີ້ເງິນລ້ຽງລູກຢູ່ແມ້ແຕ່ເວລາທີ່ທ່ານບໍ່ມີເງິນທີ່ຈະຈ່າຍ.

ການຈ່າຍເງິນລ້ຽງລູກຕ້ອງໄດ້ຈ່າຍທຸກໆເດືອນແມ້ແຕ່ຖ້າຫາກວ່າທ່ານກຳລັງໄດ້ຮັບການຊ່ວຍເຫລືອສາທາຣະນະຢູ່ກໍຕາມຊຶ່ງເປັນທີ່ຮູ້ຈັກກັນວ່າແມ່ນເງິນຊ່ວຍເຫລືອຊົ່ວຄາວສຳລັບຄອບຄົວຂັດສົນ (TANF), ຫລື ການຊ່ວຍເຫລືອທົ່ວໄປເຊັ່ນວ່າສຳລັບຄົນອາຍຸແກ່, ຕາບອດ, ເສັຽອົງຄະ (ABD), ການຊ່ວຍເຫລືອຜູ້ຍິງຖືພາ (PWA) ແລະ ບ່ອນຢູ່ອາສັຍ ແລະ ຄວາມຕ້ອງການຮີບດ່ວນ (HENS).

ຖ້າຫາກວ່າທ່ານບໍ່ສາມາດທີ່ຈະຈ່າຍເງິນລ້ຽງລູກຂອງທ່ານໄດ້, ທ່ານຈະມີໜີ້ລໍຖ້າທ່ານຢູ່ເມື່ອເວລາທ່ານໄດ້ໄປເຮັດວຽກ ຫລື ຢຸດການຮັບເອົາເງິນຊ່ວຍເຫລືອ. ອັນນີ້ຈະບໍ່ຊ່ວຍທ່ານ ຫລື ລູກຂອງທ່ານເລີຍ.

## ຂ້າພະເຈົ້າຄວນຈະເຮັດຫຍັງແດ່?

ໂທຫາພະແນກເກັບເງິນລ້ຽງລູກ (DCS) ໄດ້ທີ່ເລກ 800-442-KIDS (5437) ຫລື ຫ້ອງການຂອງພວກເຮົາບ່ອນນຶ່ງທີ່ຖືກບົ່ງຢູ່ໃນທາງດ້ານຫລັງຂອງປຶ້ມນ້ອຍຄູ່ມືຫົວນີ້. ເວົ້ານຳພະນັກງານເກັບເງິນລ້ຽງລູກ (SEO) ກ່ຽວກັບໜີ້ຂອງທ່ານ ແລະ ກໍ່ຕັ້ງແຜນການຈ່າຍເງິນຂອງທ່ານ.

## DCS ສາມາດກັກເອົາເງິນຊ່ວຍເຫລືອສາທາຣະນະຂອງຂ້າພະເຈົ້າໄດ້ບໍ່?

ບໍ່. DCS ບໍ່ສາມາດເອົາເງິນຊ່ວຍເຫລືອສາທາຣະນະ.

## DCS ສາມາດກັກເອົາເງິນຄ່າແຮງງານຂອງຂ້າພະເຈົ້າໄດ້ບໍ່?

ໄດ້. DCS ສາມາດເອົາໄດ້ເຖິງ 50% ຂອງເງິນເບີກເນື່ອເຮືອນຂອງທ່ານຖ້າຫາກວ່າທ່ານ:

– ເຮັດວຽກມີຄ່າແຮງງານ ຫລື
– ຮັບເອົາເງິນຊ່ວຍເຫລືອສາທາຣະນະ ແລະ ເຮັດວຽກມີຄ່າແຮງງານ.

## DCS ສາມາດກັກເອົາເງິນຢູ່ໃນບັນຊີທະນາຄານຂອງຂ້າພະເຈົ້າໄດ້ບໍ່?

ໄດ້. DCS ສາມາດເອົາເງິນຢູ່ໃນທະນາຄານ ແລະ ບັນຊີອື່ນໆ.

ພວກເຮົາຈະໃຫ້ທະນາຄານສົ່ງມາໃຫ້ພວກເຮົາຈຳນວນເງິນທີ່ທ່ານຍັງຕິດໜີ້ຢູ່ ຫລື ຈຳນວນເງິນຂອງການຈ່າຍເງິນລ້ຽງລູກ. ທ່ານສາມາດເຂົ້າຫາເງິນອື່ນໆທີ່ຍັງເຫລືອຢູ່ໃນບັນຊີຂອງທ່ານໃນມື້ຕໍ່ມາ. ຖ້າຫາກວ່າທ່ານມີບັນຊີຮ່ວມກັນ ແລະ ທ່ານສາມາດສະແດງໃຫ້ພວກເຮົາເຫັນວ່າບັນຊີນັ້ນບັນຈຸເງິນຄ່າແຮງງານຂອງຄູ່ຜົວເມັຽຂອງທ່ານ, ພວກເຮົາຈະບໍ່ເອົາເງິນທີ່ເປັນເຈົ້າຂອງໂດຍຄູ່ຜົວເມັຽຂອງທ່ານ. DCS ຈະບໍ່ເອົາເງິນທີ່ໄດ້ຮັບມາຈາກເງິນ TANF ຫລື ເງິນສິດຊ່ວຍເຫລືອ ອື່ນໆ.

## DCS ບໍ່ສາມາດກັກເອົາເງິນຄ່າແຮງງານຂອງທ່ານຖ້າຫາກວ່າ?

– ວຽກງານຂອງທ່ານໄດ້ຮັບເງິນທຶນມາຈາກເງິນ TANF ຫລື
– ທ່ານຈົດຊື່ເຂົ້າໃນໂຄງການວຽກງານເຊັ່ນວ່າ Community Jobs ຫລື Job Corps.

## ແມ່ນຫຍັງຈະເກີດຂຶ້ນເມື່ອເວລາຂ້າພະເຈົ້າກັບຄືນໄປເຮັດວຽກ?

ໂທຫາ DCS ແລະ ບອກພວກເຮົາກ່ຽວກັບວຽກໃຫມ່ຂອງທ່ານ. ກົດຫມາຍຂອງຣັດຖະບານກາງ ແລະ ຂອງຣັດບົ່ງໃຫ້ພວກເຮົາທີ່ຈະເກັບເອົາຢ່າງໜ້ອຍເງິນຄ່າລ້ຽງລູກປັດຈຸບັນບວກກັບຈຳນວນທີ່ບໍ່ໄດ້ຈ່າຍກາຍຜ່ານມາ (ຍັງຖືກເອີ້ນອີກຄືກັນວ່າແມ່ນໜີ້ຍ້ອນຫລັງ) . ເມື່ອເວລາການຈ່າຍເງິນບໍ່ໄດ້ຖືກເຮັດ ແລະ ເງິນລ້ຽງລູກບໍ່ຈ່າຍກາຍຜ່ານມາຍັງຕິດຄ້າງຢູ່, ພວກເຮົາສາມາດ:

– ກັກເອົາ 50% ຂອງເງິນຄ່າແຮງງານຂອງທ່ານ
– ໂຈະຍົກເລີກຊົ່ວຄາວໃບຂັບຂີ່ຂອງທ່ານ, ແລະ
– ເຮັດການກະທຳແນວອື່ນ (ໂດຍບໍ່ຕ້ອງໄດ້ບອກທ່ານກ່ອນທີ່ພວກເຮົາຈະເຮັດມັນ) .

ພວກເຮົາອາດຈະຕົກລົງທີ່ຈະຮັບເອົາຈຳນວນຕ່ຳກວ່າເງິນລ້ຽງລູກປັດຈຸບັນສຳລັບຣະຍະເວລາອັນເຈາະຈົງເພື່ອວ່າຈະຫລີກເວັ້ນການໂຈະຍົກເລີກຊົ່ວຄາວຂອງໃບຂັບຂີ່ຂອງທ່ານ.



## DCS ສາມາດຊ່ວຍຂ້າພະເຈົ້າໄດ້ແນວໃດແດ່?

ການຟັງເຣື່ອງ ຫລື ການປະຊຸມນຳຄະນະກັມມະການອາດຈະລຸດລົງໃຫ້ຕ່ຳກວ່າໃນໜນເງິນລ້ຽງລູກທີ່ທ່ານຍັງຕິດຮັດຢູ່.

ຖ້າຫາກວ່າທ່ານມີຄຳສັ່ງຈາກອຳນາດການປົກຄອງທີ່ຖືກສົ່ງອອກມາເອງ, ທ່ານອາດຈະຖືກອະນຸຍາດໃຫ້ຮ້ອງຂໍເອົາການຟັງເຣື່ອງຊ້ຳໄດ້.

ຖ້າຫາກວ່າທ່ານມີຄຳສັ່ງຈາກສານ ຫລື ຄຳສັ່ງຈາກອຳນາດການປົກຄອງ, ທ່ານສາມາດຮ້ອງຂໍເອົາການປະຊຸມນຳຄະນະກັມມະການໄດ້.

ຖ້າຫາກວ່າທ່ານບໍ່ສາມາດທີ່ຈະຈ່າຍໜີ້ທີ່ທ່ານຍັງຕິດຮັດຢູ່ຍ້ອນວ່າຄວາມລຳບາກຮ້າຍແຮງ, ພວກເຮົາຈະພິຈາຣະນາເບິ່ງທາງເລືອກການຈ່າຍຄືນຢ່າງອື່ນ.

## ການປ່ຽນແປງ (ການດັດແປງ) ຄຳສັ່ງຈ່າຍເງິນລ້ຽງລູກຂອງຂ້າພະເຈົ້າສາມາດຊ່ວຍຂ້າພະເຈົ້າໄດ້ບໍ່?

ການຈ່າຍເງິນລ້ຽງລູກຂອງທ່ານຄວນຈະຖືກຕັ້ງໄວ້ຢູ່ໃນຄຳສັ່ງຂອງທ່ານເພື່ອຈະສະທ້ອນເຖິງຄວາມສາມາດໃນປັດຈຸບັນທີ່ຈະຈ່າຍຂອງທ່ານ.

ການດັດແປງຄຳສັ່ງຈ່າຍເງິນລ້ຽງລູກເປັນຫົນທາງທີ່ຈຳນວນເງິນ ຂອງການຈ່າຍເງິນລ້ຽງລູກປັດຈຸບັນຈະຖືກປ່ຽນແປງ.

ມັນຈະບໍ່ປ່ຽນແປງຈຳນວນເງິນຂອງໜີ້ເງິນລ້ຽງລູກທີ່ບໍ່ໄດ້ຈ່າຍກາຍຜ່ານມາຈັກຢ່າງ.

ມັນຈະບໍ່ເກີດຂຶ້ນໂດຍອັດຕະໂນມັດໂລດ – ທ່ານຈະຕ້ອງໄດ້ຮ້ອງຂໍເອົາ, ແລະ ເຮັດວຽກນຳພວກເຮົາເພື່ອຈະໃຫ້ມັນເກີດຂຶ້ນ. ພວກເຮົາເຮັດວຽກນຳອັຍຍະການສານກົດຫມາຍ ແລະ ທະນາຍຄວາມຜູ້ພິພາກສາເພື່ອຈະດັດແປງຄຳສັ່ງ. ມັນສາມາດໃຊ້ເວລາຫລາຍໆເດືອນເພື່ອຈະດັດແປງຄຳສັ່ງອັນນຶ່ງ.

ທ່ານຍັງສາມາດດັດແປງຄຳສັ່ງຈ່າຍເງິນລ້ຽງລູກຂອງທ່ານຢູ່ໃນສານໂດຍການຕິດຕໍ່ທະນາຍຄວາມ ຫລື ຜູ້ປະສານງານສານກົດຫມາຍຄອບຄົວ.

ຜູ້ປະສານງານຕັ້ງຢູ່ໃນຫ້ອງການສະມຽນຂອງຄາວຕີ. ຜູ້ປະສານງານ ເອົາໃບຟອມ ແລະ ຣາຍຣະອຽດໃຫ້, ດ້ວຍຄ່າທຳນຽມກ່ຽວກັບການດຳ ເນີນການ "pro se" ແຕ່ວ່າບໍ່ສາມາດເອົາຄຳແນະນຳທາງກົດ ຫມາຍໃຫ້ທ່ານໄດ້. ການນຳເອົາ "pro se" ຂຶ້ນສານຫມາຍຄວາມວ່າທ່ານເຮັດໂດຍຕົວທ່ານເອງ.

## ການດັດແປງຈະເຮັດວຽກແນວໃດ?

ບໍ່ກ່ຽວວ່າສະພາບການຂອງທ່ານໄດ້ປ່ຽນແປງມາແລ້ວດົນນານເທົ່າໃດ, ການດັດແປງແມ່ນ "ຄາດຫວັງໄວ້" ເທົ່ານັ້ນ; ອັນນີ້ຫມາຍຄວາມວ່າ ພວກເຮົາບໍ່ສາມາດປ່ຽນແປງຈຳນວນສຳລັບການຈ່າຍເງິນຜ່ານມາ, ມີແຕ່ການຈ່າຍເງິນໃນອະນາຄົດເທົ່ານັ້ນ.